# ການຮຽນ-ການສອນ ວິຊາພາສາລາວຊັ້ນປະຖົມປີທີ 1 - ປີທີ 3 ຕາມການນຳໃຊ້ປື້ມຄູ່ມືຄູວິຊາ ພາສາລາວ ຫຼັກສູດສະບັບປຸງໃໝ່ ຊັ້ນປະຖົມສຶກສາ ໃນນະຄອນປາກເຊ

*ພົດສະໄໝ ພົມມະວົງສາ[1], ຂັນທະລີ ພົມມະເສນ[2], ສີສະໄໝ ດວງມະນີ[3], ສະເຫຼີມໄຊ ແກ້ວກະເສີມສຸກ[4]*
*ນັກສຶກສາປະລິນຍາໂທ, ສາຂາວິທະຍາສາດການສຶກສາ, ຄະນະສຶກສາສາດ, ມະຫາວິທະຍາໄລ ຈຳປາສັກ*

## ບົດຄັດຫຍໍ້

ການວິໄຈຄັ້ງນີ້ມີຫົວຂໍ້ ສະພາບການຮຽນ - ການສອນວິຊາພາສາລາວຊັ້ນປະຖົມສຶກສາຊັ້ນປີທີ 1 , ປີທີ 2ແລະ ທີ 3 ຕາມການນຳໃຊ້ປື້ມແບບຮຽນ ແລະ ປື້ມຄູ່ມືຄູວິຊາພາສາລາວ ຫຼັກສູດສະບັບປຸງໃໝ່ ຂອງ ນະຄອນປາກເຊ, ມີຈຸດປະສົງ ( 1 ) ເພື່ອສຶກສາລະດັບຄວາມຄິດເຫັນຂອງຄູສອນຊັ້ນປະຖົມສຶກສາປີທີ1 ,ປີທີ2 ແລະ ປີທີ 3 ທີ່ໄດ້ຮັບການຝຶກອົບຮົມແລ້ວ (2) ເພື່ອຮັບຮູ້ການຈັດຕັ້ງປະຕິບັດ ການນຳໃຊ້ປື້ມຄູ່ມືຄູຫລັກສູດສະບັບປັບປຸງໃໝ່ ຊັ້ນປະຖົມສຶກສາໃນການສອນວິຊາພາສາລາວຂອງຄູທີ່ສອນຊັ້ນປະຖົມປີທີ1, 2, ແລະ 3. (3) ເພື່ອຮັບຮູ້ແນວທາງ ແລະ ວິທີການພັດທະນາກ່ຽວກັບການນຳໃຊ້ປື້ມຄູ່ມືຄູຫຼັກສູດສະບັບ ປັບປຸງໃໝ່ຊັ້ນປະຖົມສຶກສາເຂົ້າໃນການສອນ ການຮຽນ - ການສອນ ວິຊາພາສາລາວໃຫ້ໄດ້ຮັບຜົນດີ, ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນຄູສອນຊັ້ນປະຖົມສຶກສາປີທີ1, ປີທີ2 ແລະ ປີທີ3 ທີ່ໄດ້ຮັບການຝຶກອົບຮົມການນຳໃຊ້ປື້ມຄູ່ມືຄູ ແລະ ປື້ມແບບຮຽນ ວິຊາພາສາລາວຕາມຫຼັກສູດສະບັບປັບປຸງໃໝ່ມາແລ້ວ, ປະຊາກອນ ແລະ ກຸ່ມຕົວຢ່າງທີ່ນຳໃຊ້ເຂົ້າໃນການສຶກສາຄັ້ງນີ້ແມ່ນ 116 ຄົນ, ກຸ່ມຕົວຢ່າງນຳໃຊ້ໃນຄັ້ງນີ້ ໂດຍກຸ່ມຕົວຢ່າງຈາກການນຳໃຊ້ກຸ່ມຕົວຢ່າງ 101 ຄົນ.

ຜົນການວິໄຈພົບວ່າ ດ້ານເພດ ເຫັນວ່າກຸ່ມຕົວຢ່າງສ່ວນຫຼາຍແມ່ນເພດຍິງ ມີ 71 ຄົນ70,30% ເພດຊາຍ ມີ 30 ຄົນ 29,70% ເປັນຄູສອນທີ່ໄດ້ຮັບການຝຶກອົບຮົມແລ້ວ, ວຸດທິການສຶກສາສ່ວນຫຼາຍແມ່ນຈົບອານຸປະລິຍາ ຈຳນວນ 58 ຄົນ 57,43% ຊັ້ນກາງ 21 ຄົນ 20,79%, ຊັ້ນປະລິຍາຕີ 22 ຄົນ 21,78%, ຈາກການວິເຄາະຂໍ້ມູນອາຍຸການເຮັດວຽກພົບວ່າ ສ່ວນຫຼາຍແມ່ນມີປະສົບການສອນມາແລ້ວ 11 – 15 ປີ ມີ 52 ຄົນ 51,49% , 1 – 5ປີ ມີ 6 ຄົນ 5,94%, 6 - 10 ປີ 14 ຄົນ 13,86%, 16 ປີຂຶ້ນໄປ 29 ຄົນ 28,71%, ຜົນວິເຄາະແຕ່ລະດ້ານ ເຫັນວ່າ: (1) ສະພາບການສອນຂອງຄູສອນຕາມປື້ມແບບຮຽນ, ຄູ່ມືຄູຕາມເນື້ອໃນຫຼັກສູດໃໝ່ ແລະ ການແຕ່ງບົດສອນຕາມຂັ້ນຕອນຂອງຄູທີ່ສອນວິຊາ ພາສາລາວໃນຊັ້ນປະຖົມປີທີ1, ປີທີ2 ແລະ ປີທີ3 ,ມີຄວາມຈິງໃນລະດັບຫຼາຍ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.49 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.78, ມີຄວາມໝາຍວ່າການສອນຂອງຄູ ແມ່ນໄປຕາມປື້ມແບບຮຽນ ແລະ ຄູ່ມືຄູວິຊາພາສາລາວໃນຊັ້ນດັ່ງກ່າວແມ່ນໄດ້ດີ. (2) ສະພາບການສອນຂອງຄູຕາມຂັ້ນຕອນເນື້ອໃນຫຼັກສູດ,ໃນແຕ່ລະຂັ້ນຕອນ ມີຄວາມຈິງໃນລະດັບຫຼາຍ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.46 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.68, ມີຄວາມໝາຍໃນລະດັບພໍໃຊ້ໄດ້ແມ່ນທຸກບັນຫາທີ່ກຳນົດໃນແບບສອບຖາມ ແມ່ນຄູປະຕິບັດໄດ້ດີພໍສົມຄວນ ແລະ ມີການພັດທະນາຂຶ້ນໄປເລື້ອຍໆ ສະແດງໃຫ້ເຫັນວ່າ ສະພາບການສອນຂອງຄູແຕ່ລະຂັ້ນຕອນເນື້ອໃນຫຼັກສູດເຖິງຈະເປັນບັນຫາໃໝ່ ແຕ່ກໍເຮັດໃຫ້ການສອນນີ້ມີຄວາມສອດຄ່ອງທັນສະໄໝ ຊຶ່ງ

---

[1] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

[2] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

[3] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

[4] *ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ*

ສະແດງອອກຜົນການວິເຄາະລວມ ມີຄ່າ $\bar{x}$ = 4.46 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.68 ແມ່ນໄດ້ດີ. (3) ສະແດງໃຫ້ເຫັນວ່າສະພາບວິທີການສອນ ແລະ ທັກສະການສອນຂອງຄູຕາມຫຼັກສູດວິຊາພາສາລາວ ( ຟັງ, ເວົ້າ, ອ່ານ ແລະ ຂຽນ ). ມີຄວາມຈິງໃນລະດັບຫຼາຍ ຊຶ່ງມີຄ່າສະເລ່ຍ $\bar{x}$= 1.23 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.37, ຊຶ່ງໃນນັ້ນຄວາມໝາຍວ່າແມ່ນຖືກຕ້ອງແມ່ນບັນຫາສະພາບວິທີການສອນ ແລະ ທັກສະການສອນຂອງຄູຕາມຫຼັກສູດວິຊາພາສາລາວ (ຟັງ, ເວົ້າ, ອ່ານ ແລະ ຂຽນ) ແມ່ນມີຄວາມເຫັນດີ ສະແດງອອກໃນການວິເຄາະແບບສອບຖາມ ຊຶ່ງມີຄ່າ $\bar{x}$ = 1.23 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.37. (4)ສະພາບການນຳໃຊ້ເກນການໃຫ້ຄະແນນ ຂອງຄູສອນ ຕາມຫຼັກສູດໃໝ່ວິຊາພາສາລາວ, ມີຄວາມຈິງໃນລະດັບຫຼາຍ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.40 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.77, ມີຄວາມໝາຍໄດ້ນຳໃຊ້ປານກາງ ແມ່ນບັນຫາການນຳໃຊ້ເກນການໃຫ້ຄະແນນ ຂອງຄູສອນ ຕາມຫຼັກສູດໃໝ່ວິຊາພາສາລາວ, ສະແດງອອກໃນການວິເຄາະແບບສອບຖາມ ຊຶ່ງມີຄ່າ $\bar{x}$ = 4.40 ແລະ ຄ່າຜັນປຽ່ນ S.D = 0.77. (5) ເນື້ອໃນການໃຫ້ການຊ່ວຍເຫຼືອ ຂອງຄູສອນຕໍ່ກັບນັກຮຽນ ທີ່ຍັງຮຽນອ່ອນວິຊາພາສາລາວ ສະແດງໃຫ້ເຫັນວ່າ ການຊ່ວຍເຫຼືອຂອງຄູສອນຕໍ່ກັບນັກຮຽນທີ່ຮຽນອ່ອນວິຊາພາສາລາວ, ຄວາມຈິງໃນລະດັບຫຼາຍ ສະແດງອອກການວິເຄາະແບບສອບຖາມ ຊຶ່ງມີຄ່າ $\bar{x}$ = 2.58 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.92.

ຜົນການວິໄຈຄັ້ງນີ້ ໄດ້ເປັນແນວທາງ ທີ່ພົວພັນກັບຂໍ້ສະເໜີແນະໃຫ້ແກ່ຄູສອນໃນການນຳໃຊ້ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນ ວິຊາພາສາລາວຫຼັກສູດສະບັບປັບປຸງໃໝ່ ຊັ້ນປະຖົມສຶກສາ ໃນນະຄອນປາກເຊ, ເພື່ອເປັນຂໍ້ມູນໃຫ້ແກ່ ຜູ້ທີ່ມີຄວາມສົນໃຈທີ່ຈະພັດທະນາຫຼັກສູດການນຳໃຊ້ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນ ວິຊາພາສາລາວ ໃນຕໍ່ໜ້າໃຫ້ມີຄວາມສົມບູນແບບ ແລະ ເຂົ້າເຖິງການຮຽນຮູ້ໃຫ້ນັກຮຽນໄດ້ຄົ້ນຄິດດ້ວນຕົນເອງຫຼາຍຂຶ້ນ, ພ້ອມດຽວກັນກໍມີປະໂຫຍດຫຼາຍຕໍ່ຄູສອນຊັ້ນປະຖົມສຶກສາຂັ້ນປະຖົມປີທີ1, ປີທີ2, ປີທີ3 ແລະ ຄູສອນໃນຊັ້ນຕໍ່ໄປ ທົ່ວແຂວງຈຳປາສັກ ໄດ້ນຳເອົາໄປສຶກສາ ເພື່ອເຮັດໃຫ້ການຮຽນ ການສອນຂອງຄູໄດ້ໄປຕາມການນຳໃຊ້ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນໃນຫຼັກສູດສະບັບປັບປຸງໃໝ່ໃນຊັ້ນປະຖົມສຶກສາ ຢ່າງເປັນເອກກະພາບທົ່ວແຂວງ ຈຳປາສັກໄດ້ເປັນຢ່າງດີ.

# The Situations of Learning and Teaching Lao Language Subject at The Primary Level, Year 1 – Year 3 According to The Uses of The Lao language Course Book of The Updated Curriculum at Primary Schools in Pakse City


## Abstract

This research topic is about the use of textbooks and teacher's guides in Lao language. The revised curriculum for primary education in Pakse city, the purpose (1) to recognize the level of opinion of primary school teachers in year 1, year 2 and year 3 who have been trained (2) To find out the problem of implementing the use of the updated teacher's guide for primary education in the teaching of Lao language for teachers who teach the first year of primary education year 2, and year 3. (3) To find ways and methods of development related to the use of the updated teacher's guide for primary education in teaching. To get good results of learning and teaching Lao language subjects, the sample group used in this study is primary school teachers in the 1st year, 2nd year and 3rd year who have been trained in the use of teacher's guides and textbooks in Lao language by to the updated curriculum. All the trainees including sample groups are 116 people on this research, the sample group used this time by the sample group from sample group of 101 people.

The results of the research found that from the gender analysis, it was found that the majority of the sample group was female with 71 people 70.30%, male with 30 people 29.70% who were trained teachers. Most of the educational qualifications are diploma number of 58 people 57.43% vocational level 21 people 20.79%, bachelor’s level 22 people 21.78%, from the analysis of working age data, it was found that most of them have 11-15 years of teaching experience, there are 52 people, 51.49%, 1-5 years are 6 people 5.94%, 6 -10 years are 14 people 13.86%, 16 years and above are 29 people 28.71%, the analysis of each aspect shows that: (1) The teacher's teaching situation according to the textbooks and teacher's guides according to the new curriculum content and the preparation of the lesson plan following the steps of the teacher who teaches Lao language in the first grade, the second grade and the third grade. There is a high level of truth with the mean value Mean $\bar{x}$ = 4.49 and standard deviation S.D = 0.78.

It means that the teacher's teaching is according to the textbook and the Lao language teacher's guide in this class is good. (2) The teacher's teaching situation according to the course content, In each step, there is a high level of truth with the average value Mean $\bar{x}$= 4.46 and the standard deviation S.D = 0.68, It means that all the problems identified in the questionnaire are sufficiently well implemented by the teachers, and has been developing more and more, showing that the teacher's teaching situation at each stage of the course content is a new challenge, but it makes this teaching more flexible and modern, which shows the results of the overall analysis with Mean x valu$\bar{x}$ =4.46 and the standard deviation S.D = 0.68 is good. (3) That shows the condition of teaching methods and teaching skills of teachers

according to the Lao language course (listening, speaking, reading and writing). There is a high level of truth with the mean value Mean $\bar{x}$ = 1.23 and standard deviation S.D = 0.37, which means that the teaching methods and teaching skills of teachers are suitable to the Lao language course (listening, speaking, reading and writing) is agreed in the analysis of the questionnaire which has Mean $\bar{x}$ = 1.23 and standard deviation S.D = 0.37. (4) The condition of using the grading criteria of the teacher according to the new Lao language curriculum, there is a high level of truth with the average value of Mean $\bar{x}$= 4.40 and the standard deviation S.D = 0.77, it means that using the grading criteria of the teacher of the new Lao language curriculum is averaged, that shows on the analysis of the questionnaire which has the value of Mean $\bar{x}$ = 4.40 and the standard deviation S.D = 0.77,

(5) The teacher's help to students who are weak in studying Lao language, the truth at a high level shows the analysis of the questionnaire, which has a mean value of Mean $\bar{x}$ = 2.58 and a standard deviation value of S.D = 0.92.

The results of this research has become a guide and recommendations for teachers in using the teacher's guide and textbook for the Lao language curriculum in the revised version of the primary education in Pakse city. In order to provide information to those who are interested in developing the curriculum for the use of guides and textbooks in the Lao language in the future to be perfect and accessible to students to explore more on their own. At the same time, it is very useful for primary education teachers in year 1, year 2 and year 3 and teachers in the other grades throughout Champasak province. Find out more the better ways of teaching and learning of the teacher to settle of the teacher's guide and textbook in the updated curriculum in the primary education throughout Champasak province.

**1. ພາກສະເໜີ**

ໃນໄລຍະຜ່ານມາ ການປະຕິບັດແຜນພັດທະນາການສຶກສາ 2021 - 2025 ໄດ້ມີສິ່ງທ້າທາຍໃນຂະ ແໜງຍ່ອຍໃນຊັ້ນປະຖົມເຊັ່ນ: 1. ຄົນລາວທຸກຄົນຕ້ອງຮັບປະກັນໃຫ້ຈົບຊັ້ນປະຖົມສຶກສາ, ລວມທັງຜູ້ທີ່ບໍ່ໃຊ້ພາສາລາວ ເປັນພາສາແມ່, ແມ່ນໃຫ້ສາມາດອ່ານອອກ, ຂຽນໄດ້ ແລະ ຄິດໄລ່ເລກເປັນ. 2. ງົບປະມານຍັງມີຂໍ້ຈໍາກັດ ໃນການລົງຊຸກຍູ້ຕິດຕາມ, ພະນັກງານ ຄູສຶກສານິເທດໃນຂັ້ນເມືອງ ເພື່ອລົງໃຫ້ການແນະນໍາຄູສອນ ຍັງບໍ່ທັນໄດ້ເອົາໃຈໃສ່ເທົ່າທີ່ຄວນ, ຈໍານວນຄູສອນລຸດລົງ ແລະ ຫ້ອງຄວບເພີ່ມຂຶ້ນ ຕໍ່າກວ່າມາດຕາຖານທີ່ກໍານົດ (ແຜນພັດທະນາ ການສຶກສາ, 2021 - 2025 ໜ້າທີ 104). ຍ້ອນແນວນັ້ນ, ການສອນຂອງຄູຕາມການນໍາໃຊ້ປຶ້ມແບບຮຽນ - ປຶ້ມຄູ່ມືຄູຊັ້ນປະຖົມປີທີ1, ປີທີ2, ປີທີ3 ຖືວ່າມີຄວາມສໍາຄັນຫລາຍເພາະແມ່ນຊັ້ນຮຽນ ທີ່ເຊື່ອມຕໍ່ລະຫວ່າງການນໍາໃຊ້ຫຼັກສູດໃໝ່ແຕ່ຊັ້ນປະຖົມປີທີ1, ປີທີ 2, ປີທີ 3, ປີທີ 4 ແລະ ປີທີ 5, ໄລຍະຜ່ານມາການລົງຕິດຕາມປະເມີນຜົນ ເພື່ອໃຫ້ການຊ່ວຍເຫລືອຄູສອນໃນທົ່ວແຂວງ ໃນການນໍາໃຊ້ການສິດສອນວິຊາພາສາລາວຕາມຫຼັກສູດສະບັບປັບປຸງໃໝ່ໃນ 9 ເມືອງ/1 ນະຄອນ, ໃນຊັ້ນປະຖົມປີທີ 1, ປີທີ 2 ແລະ ປີທີ 3 ນີ້, ສັງເກດໂດຍລວມເຫັນວ່າ ການນໍາໃຊ້ຫຼັກສູດໃໝ່ວິຊາພາສາລາວເຂົ້າໃນການສິດສອນນີ້ຍັງບໍ່ທັນໄດ້ດີເທົ່າທີ່ຄວນ ໂດຍສະເພາະການອ່ານອອກ, ຂຽນໄດ້ຍັງບໍ່ທັນຖືກຕ້ອງເທົ່າທີ່ຄວນ, ເຫັນວ່າການຈັດຕັ້ງໃນການປະຕິບັດໃນ 4 ທັກສະນີ້ແມ່ນຍັງເປັນບັນຫາຫຍຸ້ງຍາກສໍາລັບເດັກນັກຮຽນໃນຂັ້ນຕົ້ນ (ພະແນກ ສຶກສາທິການ ແລະ ກິລາ ແຂວງຈໍາປາສັກ, 2021).

ນະຄອນປາກເຊ ແມ່ນຂຶ້ນກັບແຂວງຈໍາປາສັກ ມີທີ່ຕັ້ງເປັນນະຄອນໜຶ່ງທີ່ມີເນື້ອທີ່ຕິດຈອດກັບບັນດາເມືອງເຊັ່ນທິດຕາເວັນອອກຕິດກັບ ເມືອງ ບາຈຽງຈະເລີນສຸກ, ທິດຕາເວັນຕົກຕິດກັບ ເມືອງຊະນະສົມບູນ ແລະ ແມ່ນໍ້າຂອງ, ທິດໃຕ້ຕິດກັບ ແມ່ນໍ້າຂອງ ແລະ ເມືອງຈໍາປາສັກ, ສະຖານທີ່ເມືອງແມ່ນປະກອບມີ ສະຖານການທີ່ສໍາຄັນຫຼາຍ, ເປັນນະຄອນເອກຂອງແຂວງຈໍາປາສັກ, ຊຶ່ງປັດຈຸບັນ ຫ້ອງການສຶກສາທິການ ແລະ ກິລານະຄອນປາກເຊ ພວມເອົາໃຈໃສ່ໃນການນໍາເອົາຫຼັກສູດໃໝ່ໂດຍສະເພາະແມ່ນ ການນໍາໃຊ້ປຶ້ມຄູ່ມືຄູ ແລະ ແບບຮຽນຊັ້ນປະຖົມສຶກສາເຂົ້າໃນການສອນ - ການຮຽນຕາມຄໍາແນະນໍາຂອງ ພະແນກ ສຶກສາທິການ ແລະ ກິລາແຂວງ ຈໍາປາສັກ, ນະຄອນປາກເຊ ປະກອບມີ 6 ກຸ່ມການສຶກສາຄື: ກຸ່ມການສຶກສາເຂດເທດສະບານ, ກຸ່ມການສຶກສາທີ 1, ກຸ່ມການສຶກສາທີ 2, ກຸ່ມການສຶກສາທີ 4 ແລະກຸ່ມການທີ 5, ແຕ່ລະກຸ່ມລ້ວນແຕ່ເປັນເສນາທິການ ໃນການພັດທະນາການສຶກສາ ໃຫ້ໄປຕາມແຜນຍຸດທະສາດທີ່ທາງແຂວງໄດ້ກໍານົດໄວ້, ຈາກຜົນສໍາເລັດໃນການປະຕິບັດແຜນພັດທະນາການສຶກສາ ໃນຂັ້ນນະຄອນປາກເຊ ໄລຍະຜ່ານມາແມ່ນມີທ່າກ້າວຫຼາຍເປັນຕົ້ນ: ການປະຕິບັດຜົນການຮຽນ - ການສອນຂອງນັກຮຽນໃນຊັ້ນປະຖົມປະຖົມສຶກສາໃນສົກຮຽນ 2021 ນັກຮຽນຈົບຊັ້ນປະຖົມໂດຍລວມແມ່ນ 91, 76% , ການສອນຂອງຄູຕາມການນໍາໃຊ້ປຶ້ມຄູ່ມືຄູ ແມ່ນຢູ່ໃນເກນລະດັບດີ, ແຕ່ກໍຍັງມີສິ່ງທ້າທາຍທີ່ຈະຕ້ອງໄດ້ເອົາໃຈໃສ່ຕື່ມເປັນຕົ້ນ ການຂຶ້ນຫ້ອງສິດສອນ, ການແຕ່ງບົດສອນ ແລະ ການນໍາໃຊ້ເກນຄະແນນຍັງບໍ່ທັນໄດ້ດີອີງໃສ່ເປັນຜົນເຮັດໃຫ້ການຮຽນຂອງນັກຮຽນຍັງຕໍ່າ, ການລົງຕິດຕາມ ແລະ ໃຫ້ການຊ່ວຍເຫຼືອຄູຈາກຄູຝຶກຂັ້ນແຂວງ, ນິເທດຂັ້ນເມືອງຍັງບໍ່ທັນໄດ້ເອົາໃຈໃສ່ເທົ່າທີ່ຄວນ, ເຮັດໃຫ້ຄູສອນທີ່ຝຶກອົບຮົມໄປແລ້ວຈໍານວນໜຶ່ງຍັງບໍ່ໄດ້ນໍາໃຊ້ການສອນໄປຕາມຂັ້ນຕອນການສອນ, ຍັງສອນແບບເກົ່າໂດຍການເອົາຄູເປັນໃຈກາງເໝືອນເກົ່າ, ຂາດການປະເມີນຄະແນນໄປຕາມຄໍາແນະນໍາໃນປຶ້ມຄູ່ມືຄູວິຊາພາສາລາວ, ຍັງໃຊ້ການເສັງເອົາຄະແນນ ໃນທ້າຍເດືອນຄືແບບເກົ່າ ເຊິ່ງແມ່ນອີກບັນຫາໜຶ່ງທີ່ສົ່ງຜົນໃນການກະຕຸກຊຸກຍູ້ການຮຽນຂອງນັກຮຽນອ່ອນ ແລະ ອີກບັນຫາໜຶ່ງຄືແຮງກະຕຸ້ນການຊຸກ

ດັບໃນການຂອງສອນຄູ ກໍຄືສະພາບການປ່ຽນແປງທາງ ດ້ານເສດຖະກະດ ພາຍຫຼັງການແຜ່ລະບາດຂອງພະຍາດ ໂຄວິດ 19. ( ບົດສະຫຼຸບ ຫ້ອງການສຶກສາທິການ ແລະ ກິລານະຄອນປາກເຊ, 2021 ).

ການຍົກສູງຄຸນນະພາບການສອນຂອງຄູຊັ້ນປະຖົມສຶກສາ ແມ່ນມີຄວາມສຳຄັນທີ່ສຸດ, ແມ່ນໄລຍະຂັ້ນພື້ນຖານຄວາມຮັບຮູ້ໃນການຮັບການຖ່າຍທອດຄວາມຮູ້ຈາກຄູສູ່ນັກຮຽນໃນຊັ້ນປະຖົມສຶກສາ ໂດຍສະເພາະແມ່ນໃນຊັ້ນປະຖົມປີທີ 1, ປີທີ 2 ແລະ ປີທີ 3, ຊຶ່ງຄູສອນໃນຊັ້ນດັ່ງກ່າວຕ້ອງເລີ່ມຕົ້ນຈາກການສຶກສາປຶ້ມຄູ່ມືຄູແລະ ເອກະສານທີ່ກ່ຽວຂ້ອງເພື່ອເປັນຈຸດລິເລີ່ມໃນການພັດທະນາການສອນດີຂຶ້ນ.

ການສຶກສາຄົ້ນຄວ້າ ທີ່ໄດ້ກ່າວມາຂ້າງເທິງ ການສອນຂອງຄູຕາມການນຳໃຊ້ປຶ້ມຄູ່ມືຄູ ດ້ວຍຄວາມຮູ້ ແລະ ປະສົບການຂອງຄູ ໃນການຄົ້ນຄວ້າຈະໄດ້ຮັບຜົນດີຊໍ່າໃດ ການສອນຂອງຄູຈະໄດ້ຮັບຜົນດີ, ການຮຽນຂອງນັກຮຽນຈະມີຄຸນນະພາບໄດ້ ຕ້ອງໄດ້ມີຫຼາຍຢ່າງປະກອບໃສ່ ຊຶ່ງໃນນັ້ນການສອນໄປຕາມປຶ້ມຄູມືຄູກໍເປັນພື້ນຖານ ແລະ ວິທີການດຳເນີນຕາມຂັ້ນຕອນໃຫ້ຄູສອນປະຕິບັດໄດ້ດີ, ຜູ້ຄົ້ນຄ້ວາ ມີຄວາມສົນໃຈຢາກສຶກສາວິໄຈ ຫົວຂໍ້ກ່ຽວກັບ ສຶກສາສະພາບ ການນຳໃຊ້ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາພາສາວໃຫ້ແກ່ຄູສອນປະຈຳການຊັ້ນປະຖົມສຶກສາ ໂດຍສະເພາະຊັ້ນປະຖົມປີທີ 1, ປີທີ 2 ແລະ ປີທີ 3 ທີ່ໄດ້ຜ່ານການຝຶກອົບຮົມຫຼັກສູດໃໝ່ ວິຊາພາສາລາວໄປແລ້ວ ທີ່ນະຄອນປາກເຊ ຂອງແຂວງຈຳປາສັກ ແລະ ເພື່ອເປັນແນວທາງ ໃນການລົງຕິດຕາມຊຸກຍູ້ຊ່ວຍເຫຼືອການປະຕິບັດການນຳໃຊ້ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູຕາມຫຼັກສູດສະບັບປັບປຸງໃໝ່ຊັ້ນປະຖົມສຶກສາໃຫ້ໄດ້ດີຂຶ້ນຕື່ມອີກ.

**2. ຈຸດປະສົງ**

1) ເພື່ອສຶກສາສະພາບການສອນຂອງຄູ ຕາມການນຳໃຊ້ປຶ້ມຄູ່ມືຄູວິຊາພາສາລາວຕາມໃນ ດ້ານເນື້ອໃນ, ຂັ້ນຕອນການສອນ, ທັກສະການສອນ, ການນຳໃຊ້ເກມ ແລະ ການໃຫ້ການຊ່ວຍ ນັກຮຽນອອ່ນຂອງຄູສອນຊັ້ນປະຖົມປີທີ 1, ປີທີ2 ແລະ ປີທີ 3 ໃນນະຄອນປາກເຊ ແຂວງຈຳປາສັກ.

2) ເພື່ອຄົ້ນຫາແນວທາງ ແລະ ວິທີການພັດທະນາກ່ຽວກັບການນຳໃຊ້ປຶ້ມຄູ່ມືຄູຫຼັກສູດວິຊາພາສາລາວສະບັບປັບປຸງໃໝ່ຊັ້ນປະຖົມສຶກສາເຂົ້າໃນການສອນການຮຽນ - ການສອນໃຫ້ໄດ້ຮັບ ຜົນດີ.

**3. ຄຳຖາມວິໄຈ**

1) ການຈັດຕັ້ງການຮຽນ - ການສອນຂອງຄູສອນວິຊາພາສາລາວ ຕາມການນຳໃຊ້ປຶ້ມຄູ່ມືຄູຫຼັກສູດວິຊາພາສາລາວສະບັບປັບປຸງໃໝ່ຊັ້ນປະຖົມສຶກສາປີທີ 1, ປີທີ2 ແລະ ປີທີ 3 ໃນນະຄອນປາກເຊ ມີຄືແນວໃດ ?
2) ແນວທາງ ແລະ ວິທີການພັດທະນາກ່ຽວກັບການສອນຂອງຄູ ໃນການນຳໃຊ້ປຶ້ມຄູ່ມືຄູວິຊາພາສາລາວ ຊັ້ນປະຖົມສຶກສາປີທີ 1, ປີທີ 2 ແລະ ປີທີ 3 ໃນນະຄອນປາກເຊໄດ້ຮັບຜົນແນວໃດ ?

**4.ວິທີການຄົ້ນຄວ້າ**

**4.1 ປະຊາກອນ**

ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນຄູທີ່ສອນທັງໝົດຢູ່ໂຮງຮຽນປະຖົມສຶກສາທີ່ນະຄອນປາກເຊ,ຈຳນວນ 34 ແຫ່ງ, ມີຈຳນວນຄູທັງໝົດ 196 ຄົນ ,ເຊິ່ງປະກອບມີຄູປະຖົມສຶກສາທີ່ສອນ ຊັ້ນ ປ.1 - ປ.3 ລວມທັງໝົດ 116 ຄົນ.

4.1. **ກຸ່ມຕົວຢ່າງ**

ກຸ່ມຕົວຢ່າງ ທີ່ໃຊ້ໃນການສຶກສາຄັ້ງນີ້ຜູ້ວິໄຈໄດ້ກຳນົດເອົາໂຮງຮຽນ 34 ແຫ່ງຢູ່ທີ່ນະຄອນປາກເຊທີ່ສັງກັດພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ ໂດຍກຳນົດເອົາຄູທີ່ສອນວິຊາພາສາລາວໃນຊັ້ນ ປ.1, ປ.2 ແລະ ປ.3 ຈຳນວນກຸ່ມ

ຕົວຢ່າງ ຊັ້ນປ1 - ປ3 ຈຳນວນ 116 ຄົນເຊິ່ງຖືກແບ່ງ ຕາມຊັດສ່ວນຢ່າງເໝາະສົມ.

**4.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ**

ການສຶກສາຄັ້ງນີ້ແມ່ນໄດ້ໃຊ້ແບບສອບຖາມສຶກສາສະພາບການສອນຂອງຄູກ່ຽວກັບການນຳໃຊ້ປື້ມຄູ່ມືຄູພາສາລາວ ເຊິ່ງມີລັກສະນະແບບປະມານຄ່າ 5 ລະດັບຄວາມຄິດເຫັນຂອງ LiKert (five rating scale) ໂດຍເດີນການພັດທະນາ ແລະ ເກັບຂໍ້ມູນຕາມຂັ້ນຕອນສຳຄັນດັ່ງນີ້:

1) ຜູ້ຄົ້ນຄວ້າໄດ້ດຳເນີນການຄົ້ນຄ້ວາໂດຍອີງໃສ່ການສຶກສາເອກະສານ, ທິດສະດີ, ເນື້ອໃນ, ບົດຄົ້ນຄວ້າທາງພາຍໃນ ແລະ ຕ່າງປະເທດທີ່ພົວພັນກັບຫົວຂໍ້ບົດວິໄຈສຶກສາສະພາບການສອນຂອງຄູທີ່ນຳໃຊ້ປື້ມຄູ່ມືຄູ ແລະ ແບບຮຽນຕາມຫຼັກສູດສະບັບປັບປຸງໃໝ່ຊັ້ນປະຖົມປີທີ1 - ປີທີ
2) ພັດທະນາເຄື່ອງມື
3) ກວດສອບຄວາມສອດຄ່ອງຂອງເຄື່ອງມື ພົບວ່າ: ຄ່າ IOC ຢູ່ໃນລະຫວ່າງ 0.67-1.00.
4) ນຳເອົາເຄື່ອງມືທົດສອບຄວາມທົດສອບຫາຄ່າຄວາມເຊື່ອໝັ້ນ Cronbach Alpha reliability ພົບວ່າມີຄ່າໃນລະຫວ່າງ 0.75-.0.94.
5) ປັບປຸງເຄື່ອງມືຮ່ວມກັບຄູທີ່ປຶກສາ.
6) ຂໍເອກະສານລົງເກັບກຳຂໍ້ມູນຈາກ ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ.
7) ປະສານກັບກຸ່ມເປົ້າໝາຍ.
8) ກຽມຄວາມພ້ອມ ແລະ ລົງເກັບກຳຂໍ້ມູນ.
9) ສັງລວມຂໍ້ມູນ ແລະ ກວດສອບຄວາມຖືກຕ້ອງຂອງຂໍ້ມູນ.
10) ສັງລວມຂໍ້ມູນເຂົ້າຖານຂໍ້ມູນ.
11) ວິເຄາະ ແລະ ແປຜົນຂໍ້ມູນ.
12) ລາຍງານຜົນການຄົ້ນຄວ້າຕາມຂັ້ນຕອນ.

**4.3 ສະຖິຕິວິເຄາະຂໍ້ມູນ**

ຂໍ້ມູນແບບສອບຖາມການສອນຂອງຄູແມ່ນນຳໃຊ້ສະຖິ Descriptive Statistics ດ້ວຍໂປແກຣມສຳເລັດຮູບສະຖິຕິ spss. ນຳໃຊ້ສະຖິຕິດ້ານປະລິມານໂດຍສົມທຽບອັດຕາສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜົນປ່ຽນມາດຖານ (Standard deviation) ແລະ ໃຊ້ການຄິດໄລ່ອັດຕາສ່ວນຮ້ອຍ ດັ່ງລາຍລະອຽດ ລຸ່ມນີ້:

**1)** ອັດຕາສ່ວນຮ້ອຍ (Percentage) (ບຸນຊົມ ສີສະອາດ, 2535)

$$P = \frac{f}{n} \times 100$$

**P** = ສ່ວນຮ້ອຍ

**f** = ຈຳນວນ ຫລື ຄວາມຖີ່ທີ່ຕ້ອງການຫາສ່ວນຮ້ອຍ.

**n** = ຈຳນວນຂໍ້ມູນຕົວຢ່າງ

**2)** ຄ່າສະເລ່ຍ (**Mean**) (ບຸນຊົມ ສີສະອາດ, 2535)

$$\bar{x} = \frac{\sum x}{N}$$

$\sum$**x** = ຜົນລວມທັງໝົດຂອງຄະແນນ

$\bar{x}$ = ຄະແນນຕົວກາງເລກຄະນິດ

**n** = ຈຳນວນຄະແນນໃນຂໍ້ມູນ

- ໂປຣແກຣມທີ່ໃຊ້ວິເຄາະຂໍ້ມູນ: ແມ່ນໃຊ້ໂປຣແກຣມສຳເລັດຮູບ Excel ສ້າຖານຂໍ້ມູນ ແລະ ວິເຄາະຜົນໂດຍໃຊ້ໂປຣແກຣມ SPSS 2021.

**1. ຜົນການວິເຄາະ ແລະ ແປຜົນ**

**4.3.1 ດ້ານເນື້ອໃນປຶ້ມຄູ່ມືຄູ**

ຜົນການວິເຄາະການສອນຕາມເນື້ອໃນປຶ້ມຄູ່ມືຄູ ວິຊາພາສາລາວ ພົບວ່າ ປຶ້ມຄູ່ມືວິຊາພາສາລາວເປັນລາຍວິຊາທີ່ສຳຄັນ $\bar{x}$ = 4.71 ແລະ ຄ່າຜົນປ່ຽນມາດຕາຖານ **S.D** = 0.57. ມີຄວາມຈິງໃນການນຳໃຊ້ຫຼາຍທີ່ສຸດ, ອັນລັບທີສອງແມ່ນຄູສາມາດສັ່ງຄວາມຮູ້ວິຊາພາສາລາວໃຫ້ນັກຮຽນເຂົ້າໃຈ $\bar{x}$= 4.54 ແລະຄ່າ

ຜົນປ່ຽນມາດຕາຖານ S.D = 0.561 ມີຄວາມຈິງໄດ້ນຳໃຊ້ໃນລະດັບຫຼາຍທີ່ສຸດ, ອັນດັບທີ ສາມ ຄູມີຄວາມພ້ອມໃນການນຳໃຊ້ປຶ້ມຄູ່ມືຄູເຂົ້າໃນການສອນວິຊາພາສາລາວ $\bar{x}$ = 4.50 ແລະ ຄ່າຜົນປ່ຽນມາດຕາຖານ S.D = 0.66, ສະແດງວ່າ ໄດ້ນຳໃຊ້ເຂົ້າຫຼາຍໃນລະດັບດີຫຼາຍ, ອັນດັບທີ ສີ່ ຄູມີຄວາມເຂົ້າໃຈໃນການອອກແບບກິດຈະກຳ ການສອນຕາມເນື້ອໃນປຶ້ມຄູ່ມືຄູວິຊາພາສາລາວ ຕາມຫຼັກສູດສະບັບປັບປຸງໃໝ່ທີ່ໄດ້ຝຶກອົບຮົມມາ ລາຍວິຊາໃນຫຼັກສູດມີຄວາມຊັດເຈນ ໃນການປະຍຸກໃຊ້ໃນ ປັດຈຸບັນ ມີຄວາມຈິງໃນລະດັບຫຼາຍ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.48ແລະ ຄ່າຜົນປ່ຽນມາດຕາຖານ S.D = 0.70 ມີຄວາມຈິງໃນການນຳໃຊ້ຫຼາຍທີ່ສຸດທີ່ສອດຄ່ອງ ແລະ ເໝາະສົມຂອງການນຳຫຼັກສູດໃໝ່ວິຊາພາສາລາວນີ້ ແມ່ນການໃຫ້ນັກຮຽນໄດ້ຄົ້ນຄິດດ້ວຍຕົນເອງຫຼາຍຂຶ້ນ, ອັນດັບທີ 5 ວິຊາພາສາລາວໃນປຶ້ມຄູ່ມືຄູມີຄວາມຊັດເຈນກັບການປະຍຸກໃຊໃນປັດຈຸບັນ $\bar{x}$ = 4.46 ແລະ ຄ່າຜົນປ່ຽນມາດຕາຖານ S.D = 0.59, ຊຶ່ງໃນນັ້ນມີມີຄວາມຈິງໃນການນຳໃຊ້ໃນລະດັບຫຼາຍ, ອັນດັບທີ 6 ທ່ານໄດ້ນຳໃຊ້ເກມ ແລະ ການວັດປະເມີນຜົນການຮຽນ ການສອນວິຊາພາສາລາວຢ່າງເໝາະສົມ ແລະ ຍຸດຕິທຳແກ່ນັກຮຽນທຸກຄົນ $\bar{x}$ = 4.38 ແລະຄ່າຜົນປ່ຽນມາດຕາຖານ S.D = 0.61, ສະແດງໃຫ້ເຫັນວ່າ ຄູມີຄວາມພ້ອມໃນການນຳໃຊ້ປຶ້ມຄູ່ມືການສອນວິຊາພາສາລາວໃນຫຼັກສູດໄດ້ຢ່າງຖືກຕ້ອງ. ມີຄວາມຈິງໃນລະດັບຫຼາຍ, ອັນດັບທີ່ເຈັດທ່ານໄດ້ປະຕິບັດຄົບທຸກຂັ້ນຕອນກິດຈະກຳໃນປຶ້ມຄູ່ມືຄູວິຊາພາສາລາວທີ່ໄດ້ກຳນົດ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.35 ແລະ ຄ່າຜົນປ່ຽນມາດຕາຖານ S.D = 0.67 ຊຶ່ງໃນນັ້ນມີຄວາມວ່າມີຄວາມຈິງໃນການນຳໃຊ້ຄົບຖ້ວນໃນລະດັບຫຼາຍ.

**4.3.2 ດ້ານຂັ້ນຕອນໃນປຶ້ມແບບຮຽນ ແລະ ຄູ່ມືຄູ.**

**ຂັ້ນນຳ** ການວິເຄາະຂໍ້ມູນ ໄດ້ພົບວ່າ ຄູໄດ້ບັນທຶກການຂາດສອນຂອງນັກຮຽນ ຄູມີການບັນທຶກການຂາດ.ຄວາມຈິງໃນລະດັບຫຼາຍ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.60 ແລະ ຄ່າຜົນປ່ຽນມາດຕາຖານ S.D = 0.71, ຊຶ່ງໃນນັ້ນມີການນຳໃຊ້ການຈັດຕັ້ງປະຕິບັດຫຼາຍແມ່ນບັນຫາການບັນທຶກການຂາດຂອງນັກຮຽນ ກ່ອນເຂົ້າສູ່ການສອນ ທຸກຄັ້ງ , ອັບດັບທີສອງ ຄູໄດ້ມີຄວາມກຽມພ້ອມບົດສອນ ຖືກຕ້ອງ ແລະ ຄົບຖ້ວນ. ມີຄວາມຈິງການນຳໃຊ້ໃນລະດັບຫຼາຍ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.51 ແລະຄ່າຜົນປ່ຽນມາດຕາຖານ S.D = 0.64, ອັນດັບທີ ສາມຄູມີກິດຈະກຳ ແລະ ສ້າງແຮງຈູງໃຈແກ່ນັກຮຽນກ່ອນເຂົ້າສູ່ບົດຮຽນ, ມີຄ່າສະເລ່ຍ $\bar{x}$ = 4.27 ແລະຄ່າຜົນປ່ຽນມາດຕາຖານ S.D = 0.84 ຊຶ່ງໃນນັ້ນມີຄວາມຈິງໃນການນຳໃຊ້ລະດັບກາງ.

**ຂັ້ນສອນ** : ການວິເຄາະພົບວ່າ ອັນດັບທີໜຶ່ງແມ່ນ ການຂຽນບົດຮຽນໃສ່ກະດານຂອງຄູຈະແຈ້ງ ແລະ ຖືກຕ້ອງໃນປຶ້ມຄູ່ມືຄູ ວິຊາພາສາລາວຕາມຫຼັກສູດສະບັບປັບປຸງໃໝ່ ແລະ ການກຳນົດແບບການຊ່ວຍເຫຼືອນັກຮຽນໃນເວລາເຮັດກິດຈະກຳມີຄວາມຈະແຈ້ງ ແລະ ເຂົ້າໃຈງ່າຍ , ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.50 ແລະ ຄ່າຜົນປ່ຽນມາດຕາຖານ S.D = 0.60 ຊຶ່ງໃນນັ້ນມີຄວາມຈິງໃນການນຳໃຊ້ໝາຍລະດັບຫຼາຍ, ອັນດັບທີສອງແມ່ນການນຳໃຊ້ເວລາເຂົ້າໃນການນຳພານັກຮຽນເຮັດກິດຈະກຳຢ່າງເໝາະສົມ ແລະ ຖືກຕ້ອງຕາມການກຳນົດໃນປຶ້ມຄູ່ມືຄູ ຄ່າສະເລ່ຍ $\bar{x}$ = 4.49 ແລະ ຄ່າຜົນປ່ຽນມາດຕາຖານ S.D = 0.64, ໝາຍຄວາມວ່າມີຄວາມຈິງໃນການນຳໃຊ້ໃນລະດັບ ຫຼາຍ.

**ຂັ້ນສະຫຼຸບ** : ຜ່ານການວິເຄາະພົບວ່າ ອັບດັບທຳອິດ ຄູໄດ້ກຳນົດເວລາການສອນຖືກຕ້ອງຕາມເວລາທີ່ໄດ້ກຳນົດໃນຕາຕະລາງທີ່ກຳນົດໃນປຶ້ມຄູ່ມືຄູ ຄູຊຶ່ງມີຄ່າສະເລ່ຍ $\bar{x}$ = 4.51 ແລະຄ່າຜົນປ່ຽນມາດຕາຖານ S.D = 0.70 ຊຶ່ງໃນນັ້ນມີຄວາມໝາຍການນຳ

ໃຊ້ໃນລະດັບຫຼາຍ ແລະ ຄູໄດ້ມອບວຽກບ້ານໃຫ້ນັກຮຽນ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.51 ແລະຄ່າຜັນປ່ຽນມາດຕາຖານ S.D = 0.61 ຊຶ່ງໃນນັ້ນມີຄວາມໝາຍການນຳໃຊ້ໃນລະດັບຫຼາຍ, ອັນດັບຮອງລົງມາ ທີສອງແມ່ນ ຄູມີການວັດ ແລະ ປະເມີນຜົນການຮຽນຂອງນັກຮຽນ ຊຶ່ງມີຄ່າ $\bar{x}$ = 4.44 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.71, ຄວາມຈິງໃນການນຳໃຊ້ລະດັບຫຼາຍ , ອັນດັບທີ ສາມ ແມ່ນ ຄູໄດ້ຂຽນບົດຮຽນຕາມຈຸດປະສົງທີ່ໄດ້ກຳນົດ ສະແດງອອກໃນການວິເຄາະແບບສອບຖາມ ຊຶ່ງມີຄ່າ $\bar{x}$ = 4.42 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.67, ມີຄວາມຈິງໃນການນຳໃຊ້ໃນລະດັບ ຫຼາຍ , ອັນດັບທີ່ ສີ່ ຄູໄດ້ສຶກສາແນວຄິດໃຫ້ແກ່ນັກຮຽນທຸກຄັ້ງໃນໄລຍະດຳເນີນການສອນ ການຮຽນ ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.39 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.73, ຊຶ່ງມີຄວາມໝາຍການນຳໃຊ້ໃນລະດັບປານກາງ.

4.4 ດ້ານທັກສະການສອນຂອງຄູໃນການນຳໃຊ້ປຶ້ມຄູ່ມືຄູ.

ຜົນການວິເຄາະພົບວ່າ ທັກສະການສອນຂອງຄູຕາມຫຼັກສູດວິຊາພາສາລາວ, ອັນດັບທຳອິດເຊິ່ງມີຄ່າສະເລ່ຍ $\bar{x}$ = 1.00 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.00, ຊຶ່ງໃນນັ້ນຄວາມໝາຍມີຄວາມຈິງໃນການນຳໃຊ້ໃນລະດັບ ຫຼາຍທີ່ສຸດ , ອັນດັບສອງຮອງລົງມາແມ່ນ ທັກສະການສອນຂອງຄູຕາມປຶ້ມຄູ່ມືຄູ ວິຊາພາສາລາວ ໄດ້ຖືກຖ່າຍທອດໃຫ້ນັກຮຽນພຽງພໍ ແລະຄົບຖ້ວນຕາມການແນະນຳໃນປຶ້ມຄູ່ມືຄູວິຊາພາສາລາວໃນຫຼັກສູດທີ່ໄດ້ກຳນົດ ຊຶ່ງມີຄ່າ $\bar{x}$ = 1.04 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.20 ສະແດງມີຄວາມຈິງໃນລະດັບການນຳໃຊ້ຫຼາຍທີ່ສຸດ , ອັນດັບທີ 4 ທັກສະການສອນຂອງຄູໃນພາສາລາວ ( ການເວົ້າ-ການຟັງ ) ໄດ້ຖືກຖ່າຍທອດໃຫ້ນັກຮຽນພຽງພໍ ແລະ ຄົບຖ້ວນຕາມການແນະນຳໃນປຶ້ມຄູ່ມືຄູວິຊາພາສາລາວໃນຫຼັກສູດໃໝ່ທີ່ກຳນົດ ຊຶ່ງມີຄ່າສະເລ່ຍ $\bar{x}$ = 1.16 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.37 ແລະ ທັກສະການສອນພາສາລາວ (ຂຽນ) ຖ່າຍທອດໃຫ້ນັກຮຽນພຽງພໍ ແລະ ຄົບຖ້ວນຕາມການແນະນຳໃນປຶ້ມຄູ່ມືຄູວິຊາພາສາລາວໃນຫຼັກສູດໃໝ່ທີ່ກຳນົດ ຊຶ່ງມີຄ່າສະເລ່ຍ $\bar{x}$ = 1.16 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.37 ທັງສອງຂໍ້ນີ້ສະແດງວ່າມີຄວາມຈິງໃນລະດັບການນຳໃຊ້ ຫຼາຍ, ອັນດັບຕໍ່ມາ ນັກຮຽນສາມາດຂຽນຕົວອັກສອນ, ສະຫຼະ ແລະ ວັນນະຍຸດ ວິຊາພາສາລາວໄດ້ຖືກຕ້ອງ, ງາມ ແລະ ຊັດເຈນໄດ້ 85%, ຊຶ່ງມີຄ່າສະເລ່ຍ $\bar{x}$ = 1.39 ແລະຄ່າຜັນປ່ຽນມາດຕາຖານ S.D = 0.60, ຊຶ່ງໃນນັ້ນມີການນຳໃຊ້ໃນລະດັບປານກາງ, ອັນດັບ ທີ6 ນັກຮຽນສາມາດຮັບເວົ້າ ແລະ ອ່ານ ວິຊາພາສາລາວທີ່ທ່ານໄດ້ຖ່າຍທອດໄປໄດ້ 85% ຢູ່ໃນທັກສະ ການເວົ້າ ແລະ ການຟັງ ສະແດງອອກ ຜົນວິເຄາະແບບສອບຖາມ ຊຶ່ງມີຄ່າ $\bar{x}$ = 1.43 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.50, ສະແດງອອກມີຕວາມຈິງໃນການນຳໃຊ້ລະດັບປານກາງ , ອັນດັບສຸດທ້າຍນັກຮຽນສາມາດຮັບຟັງ ແລະ ເວົ້າວິຊາພາສາລາວທີ່ໄດ້ຖ່າຍທອດໄປໄດ້ 85% ຊຶ່ງມີຄ່າສະເລ່ຍ $\bar{x}$ = 1.49 ແລະ ຄ່າຜັນປ່ຽນມາດຕາຖານ S.D = 0.37, ຊຶ່ງໃນນັ້ນມີຄວາມຈິງການນຳໃຊ້ໃນລະດັບປານກາງ

**5. ວິພາກຜົນ**

ຄື ເພື່ອທົດສອບຄວາມສຳພັນລະຫວ່າງຮູບແບບຂອງພາວະຜູ້ນຳ ແລະ ໂຮງຮຽນທີ່ມີປະສິດທິຜົນຢູ່ ໂຮງຮຽນມັດທະຍົມສຶກສາສົມບູນ ພາຍໃນແຂວງເຊກອງ ແລະ ທັງເປັນການທົດສອບສົມມຸດຕິຖານທີ່ຕັ້ງໄວ້; ຜົນການວິເຄາະໄດ້ພິສູດໃຫ້ເຫັນຢ່າງຈະແຈ້ງກ່ຽວກັບຮູບແບບຂອງພາວະຜູ້ນຳທັງ 3 ຮູບແບບຄື: ແບບອັດຕະນິຍົມ, ແບບມີສ່ວນຮ່ວມ ແລະ ແບບເປັນຕົວແທນ ແມ່ນມີຄວາມສຳພັນກັນກັບໂຮງຮຽນທີ່ມີປະສິດທິຜົນຢ່າງເລິກເຊິ່ງ ສະນັ້ນ, ຜົນການສຶກສາຄັ້ງນີ້ແມ່ນມີຄວາມສອດຄ່ອງກັບສົມມຸດຕິຖານທີ່ຕັ້ງໄວ້ທັງ

ໝົດ. (Aletta Marie Price, 2008)ແລະ(Abid Hussain Ch.,2017) ສຶກສາພົບວ່າຜູ້ບໍລິຫານແບບຜະເດັດການມີໄລຍະສຳພັນທາງລົບຕໍ່ແຮງຈູງໃນການເຮັດວຽກຂອງຄູ ແລະ ວຽກຈັດການຮຽນ-ການສອນໂດຍກົງ ແລະ ຜູ້ບໍລິຫານແບບມີສ່ວນຮ່ວມ ແມ່ນມີໄລຍະສຳພັນທາງບວກຕໍ່ການເຮັດວຽກຂອງຄູສອນ ແລະ ທາງຜູ້ອຳນວຍຄວາມຈະເປີດກ້ວາງໃຫ້ພະນັກງານພາຍໃນໂຮງຮຽນມີສ່ວນຮ່ວມໃນການຕັດສິນໃຈຫຼາຍຂື້ນ. Sobia Kaleem ພ້ອມຄະນະ. (2021) ຍັງສຶກສາພົບຕື່ມອີກວ່າ ຮູບແບບຂອງພາວະຜູ້ນຳແບບມີສ່ວນຮ່ວມ ແມ່ນມີໄລຍະສຳພັນທາງບວກຕໍ່ກັບປະສິດທິຜົນຂອງສະພາບແວດລ້ອມໂຮງຮຽນ ແລະ ຜົນສຳເລັດທາງວິຊາການຂອງນັກຮຽນ. Duangjai Boonlaand Saowanee Treputtharat (2013) ຍັງສຶກສາພົບອີກວ່າ ຄວາມສຳພັນລະຫວ່າງຮູບແບບຂອງພາວະຜູ້ນຳ ແລະ ໂຮງຮຽນທີ່ມີປະສິດທິຜົນແມ່ນຄວາມສຳພັນກັນທາງບວກຢ່າງມີໄລຍະສຳພັນທາງສະຖິຕິໃນລະດັບຄວາມສຳພັນປານກາງ.ການໃຫ້ຄະແນນຂອງຄູທີ່ໃຊ້ປຶ້ມແບບຮຽນພາສາລາວສອນ.

5.1 ຜົນການວິເຄາະພົບວ່າ ອັນດັບໜຶ່ງ ຄູໄດ້ປະເມີນຄວາມຮູ້ຂອງນັກຮຽນທຸກຄັ້ງພາຍຫຼັງທີ່ສິ້ນສຸດການຮຽນໃນໄລຍະທ້າຍຊົ່ວໂມງສອນ, ຊຶ່ງມີຄ່າສະເລ່ຍ $\bar{x}$ = 4,51 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.60, ມີຄວາມຈິງໃນການນຳໃຊ້ລະດັບຫຼາຍທີ່ສຸດ, ຮອງລົງມາອັນດັບທີ ສອງ ແມ່ນຄູໄດ້ກວດວຽກບ້ານ ຫຼື ບົດຝຶກຫັດນັກຮຽນທຸກຄັ້ງຊຶ່ງມີຄ່າສະເລ່ຍ $\bar{x}$ = 4,49 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.67, ມີຄວາມຈິງການນຳໃຊ້ໃນລະດັບຫຼາຍ, ອັນດັບສາມ ຄູໄດ້ນຳໃຊ້ເກນການໃຫ້ຄະແນນ ຕາມຫຼັກສູດສະບັບປັບປຸງໃໝ່ວິຊາພາສາລາວທຸກຂັ້ນຕອນຢ່າງຄົບຖ້ວນ.ຊຶ່ງມີຄ່າສະເລ່ຍ $\bar{x}$ = 4,46 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.70, ມີຄວາມຈິງໃນການນຳໃຊ້ລະດັບຫຼາຍ ,ຕໍ່ມາອັນດັບທີ ສີ່ ຄູໄດ້ອາງກິດຈະກຳຕ່າງໆໃນບົດສອນໄດ້ຢ່າງເໝາະສົມ ແລະ ສອດຄ່ອງກັບປຶ້ມຄູ່ມື ແລະ ແບບຮຽນວິຊາພາສາລາວ, ຊຶ່ງມີຄ່າສະເລ່ຍ $\bar{x}$ = 4,45 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.67, ມີຄວາມຈິງໃນການນຳໃຊ້ລະດັບຫຼາຍ , ຮອງລົງມາອັນດັບທີ ຫ້າ ແມ່ນ,ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.49 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.67, ມີຄວາມຈິງການນຳໃຊ້ໃນລະດັບຫຼາຍ , ຕໍ່ມາ ຄູມີປຶ້ມບັນທຶກການໃຫ້ຄະແນນວິຊາພາສາລາວແບບ ຮູບລິກ. ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.41 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.70, ມີຄວາມຈິງການນຳໃຊ້ໃນລະດັບຫຼາຍ, ຖັດມາແມ່ນ ຄູໄດ້ຕິດຕາມປະເມີນການຟັງ, ການເວົ້າ, ການອ່ານ, ການຂຽນຂອງນັກຮຽນທຸກຄັ້ງ. ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.38 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.80, ມີຄວາມຈິງການນຳໃຊ້ໃນລະດັບຫຼາຍ, ຈາກນັ້ນ ຄູໄດ້ຕິດຕາມປະເມີນການຟັງ, ການເວົ້າ, ການອ່ານ, ການຂຽນຂອງນັກຮຽນທຸກຄັ້ງຊຶ່ງມີຄ່າສະເລ່ຍ $\bar{x}$ = 4.35 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.88, ມີຄວາມຈິງການນຳໃຊ້ໃນລະດັບຫຼາຍ, ອັນດັບສຸດທ້າຍ ຄູໄດ້ນຳໃຊ້ການປະເມີນກ່ອນການເລີ້ມສອນທຸກຄັ້ງ. ຊຶ່ງມີຄ່າສະເລ່ຍ $\bar{x}$ = 4.19 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.15, ມີຄວາມຈິງການນຳໃຊ້ໃນລະດັບຫຼາຍ.

**5.2 ການຊ່ວຍເຫຼືອຂອງຄູສອນ.**

ຜົນການວວິເຄາະພົບວ່າ ( 1 )ໃຫ້ນັກຮຽນໄດ້ຮຽນຮູ້ນຳໝູ່ຮ່ວມຫ້ອງທີ່ຮຽນໄດ້ດີ, ຊຶ່ງມີຄ່າ $\bar{x}$ = 2.79 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0. 84, ມີຄວາມຈິງທີ່ຄູໄດ້ໃຊ້ໃນລະດັບຫຼາຍທີ່ສຸດ, ຮອງມາແມ່ນ ເພື່ອ ຊ່ວຍໃຫ້ນັກຮຽນມີຮຽນອອ່ນວິຊາພາສາລາວ ຄູໃຫ້ຄູຄວນໃຫ້ນັກຮຽນໄດ້ຮຽນຮູ້ຮ່ວມຫ້ອງກັບນັກຮຽນທີ່ຮຽນດີຊຶ່ງມີຄ່າ $\bar{x}$ = 2.73 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.84 ສະແດງວ່າຄູໄດ້ນຳໃຊ້ມີຄວາມຈິງໃນລະດັບຫຼາຍທີ່ສຸດ.ອັນດັບສຸດທ້າຍຖ້ານັກຮຽນຮູ້ພາສາອື່ນທີ່ບໍ່ແມ່ນພາສາລາວ ຄູຄວນ ຈັດສັບບ່ອນນັ່ງໃຫ້ມີຜູ້ທີ່ສາມາດສື່ສານໄດ້ 2 ພາສາເພື່ອໃຫ້

ມີຜູ້ຊ່ວຍເພີ້ມເຕີມ ສະແດງອອກ ການວິເຄາະແບບສອບຖາມ ເຊິ່ງມີຄ່າ $\bar{x}$ = 2.21 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.81, ມີຄວາມຈິງທີ່ຄູໃຊ້ໃນລະດັບປານກາງ, ສາມາດສະຫຼຸບໄດ້ວ່າ ເນື້ອໃນການໃຫ້ການຊ່ວຍເຫຼືອຂອງຄູສອນ ຕໍ່ກັບນັກຮຽນທີ່ຍັງຮຽນອອ່ນວິຊາພາສາລາວ) ສະແດງໃຫ້ເຫັນວ່າ ການຊ່ວຍເຫຼືອຂອງຄູສອນຕໍ່ກັບນັກຮຽນ ທີ່ຮຽນອອ່ນວິຊາພາສາລາວ, ຄວາມຈິງໃນລະດັບຫຼາຍ ສະແດງອອກການວິເຄາະແບບສອບຖາມ ຊຶ່ງມີຄ່າ $\bar{x}$ = 2.58 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.92.

### 5.3 ສັງລວມປະສິດທິຜົນການສອນໂດຍໃຊ້ປຶ້ມຄູ່ມືສະບັບໃໝ່

ຜົນຂອງການວິເຄາະຂໍ້ມູນຈາກຜູ້ຕອບແບບສອບຖາມ ພົບວ່າ ການສອນວິຊາພາສາລາວ ຕາມການນຳໃຊ້ປຶ້ມຄູ່ມື ແລະ ແບບຮຽນວິຊາພາສາລາວ ຊຶ່ງມີຄ່າ $\bar{x}$ = 4,49 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.78. ມີຄວາມຈິງໃນການນຳໃຊ້ຕາມປຶ້ມຄູ່ມືຄູໃນລະດັບຫຼາຍ: ຮອງລົງມາອັນດັບທີສອງ ຂັ້ນຕອນການສອນວິຊາພາສາລາວ ຕາມປຶ້ມຄູ່ມືຄູ ໃນຫຼັກສູດສະບັບປັບປຸງໃໝ່ ຊຶ່ງມີຄ່າ $\bar{x}$ = 4,46 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.68. ມີຄວາມຈິງໃນການນຳໃຊ້ຕາມປຶ້ມຄູ່ທີຄູໃນລະດັບຫຼາຍ: ອັນດັບທີສາມ ແມ່ນການນຳໃຊ້ເກນການໃຫ້ຄະແນນຊຶ່ງມີຄ່າ $\bar{x}$ = 4,40 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.77. ມີຄວາມຈິງໃນການນຳໃຊ້ຕາມປຶ້ມຄູ່ມືຄູ ໃນລະດັບຫຼາຍ, ອັນດັບທີສີ່ ແມ່ນ ການໃຫ້ການຊ່ວຍເຫຼືອນັກຮຽນທີ່ຮຽນອອ່ນ ຊຶ່ງມີຄ່າ $\bar{x}$ = 2,58 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.92. ມີຄວາມຈິງ ໃນການນຳໃຊ້ຕາມປຶ້ມຄູ່ມືຄູໃນລະດັບປານກາງ , ສຸດທ້າຍແມ່ນ ທັກສະການສອນວິຊາພາສາລາວຕາມປຶ້ມຄູ່ມືຄູວິຊາພາສາລາວຕາມຫຼັກສູດສະບັບປັບປຸງໃໝ່ ຊຶ່ງມີຄ່າ $\bar{x}$ = 1, 23 ແລະ ຄ່າຜັນປຽ່ນມາດຕາຖານ S.D = 0.39. ມີຄວາມຈິງໃນການນຳໃຊ້ຕາມປຶ້ມຄູ່ທີຄູໃນລະດັບປານກາງ.

### 5.4 ອະພິປາຍຜົນ

ອີງໃສ່ຜົນການວິເຄາະຂໍ້ມູນປະຕິບັດການສອນຂອງຄູສອນຕາມປຶ້ມຄູ່ມືຄູ ວິຊາພາສາລາວຕາມຫຼັກສູດສະບັບປັບປຸງໃໝ່ໂດຍອີງໃສ່ 5 ດ້ານໃນປຶ້ມຄູ່ມືຄູ ວິຊາພາສາລາວ ໄດ້ພົບວ່າ ການສອນຂອງຄູ ຕາມດ້ານເນື້ອໃນຂອງປຶ້ມຄູ່ມືຄູ ວິຊາພາສາລາວເປັນວິຊາໜຶ່ງທີ່ສຳຄັນ ແລະ ຄູມີຄວາມເຂົ້າໃຈໃນການສົ່ງຄວາມຮູ້ໃຫ້ນັກຮຽນແມ່ນໄດ້ນຳໃຊ້ໃນລະດັບດີຫຼາຍ, ພາຍຫຼັງທີ່ຝຶກອົບຮົມມາແລ້ວ ຄູສອນແມ່ນມີຄວາມພ້ອມໃນການສອນໄປຕາມປຶ້ມຄູ່ມືຄູ່ ວິຊາພາສາລາວ, ມີການອອກແບບກິດຈະກຳການສອນຕາມປຶ້ມຄູ່ມືຄູ ແລະ ແບບຮຽນຢ່າງຖືກຕ້ອງ, ຄູສອນໄດ້ປະຕິບັດຄົບທຸກຂັ້ນຕອນ ການສອນໃຫ້ແນະນຳໃນປຶ້ມຄູ່ມືຄູ ວິຊາພາສາລາວ, ຄູສອນໄດ້ນຳໃຊ້ເກນການໃຫ້ຄະແນນຕາມການແນະນຳໃນປຶ້ມຄູ່ມືຄູວິຊາພາສາລາວ ແລະ ການແນະນຳພາສາລາວຕາມປຶ້ມຄູ່ມືຄູ ໃນຫຼັກສູດສະບັບປັບປຸງໃໝ່ ແມ່ນສາມາດປະຍຸກໃຊ້ໃນຍຸກສະໄໝປັດຈຸບັນ ໂດຍສະເພາະໃນຍຸກທີ່ນຳໃຊ້ຄວາມກ້າວໜ້າທາງດ້ານ ນະວັດຕະກຳ ເຕັກໂນໂລຊີ ແມ່ນມີຄວາມສອດຄ່ອງທີ່ສຸດ ຊຶ່ງມັນໄດ້ສະແດງອອກໃນການປະຕິບັດຕາມຂັ້ນຕອນ ການສອນຕາມໂຄງຮ່າງການແຕ່ງບົດສອນທີ່ກຳນົດ ໃນການແນະນຳປຶ້ມຄູ່ມືຄູວິຊາພາສາລາວຕາມຫຼັກສູດໃໝ່, ສຳລັບການໃຫ້ການຊ່ວຍເຫຼືອນັກຮຽນທີ່ຮຽນອອ່ນວິຊາພາສາລາວແມ່ນຄູໄດ້ເອົາໃຈໃສ່ນັກຮຽນໂດຍໃຫ້ນັກຮຽນນັ່ງນຳໝູ່ເປັນສ່ວນຫຼາຍ, ແຕ່ເນື່ອງຈາກວ່າການສອນວິຊາພາສາລາວຕາມປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູໃນຫຼັກສູດໃໝ່ຖ້າທຽບໃສ່ ເປັນພາສາແຫ່ງຊາດແລ້ວ ການນຳໃຊ້ການສອນດັ່ງກ່າວຍັງມີບາງດ້ານທີ່ຄູຕ້ອງໄດ້ເອົາໃຈໃສ່ຕື່ມເປັນຕົ້ນ ການຄົ້ນຄ້ວາບົດຮຽນປະກອບເຂົ້າໃນການແຕ່ງບົດສອນຕາມຂັ້ນຕອນການສອນ, ເພີ່ມຄວາມເອົາໃຈໃສ່ໃນທັກສະການສອນໃຫ້ຫຼາຍຂຶ້ນ ແລະການ

ແນະນຳຊຸກຍູ້ຊ່ວຍເຫຼືອນັກຮຽນອອ່ນວິຊາພາສາລາວ ໃນຊັ້ນປະຖົມສຶກສາຂັ້ນປີທີ1, ປີທີ2 ແລະ ປີທີ3 ໃນ ທົ່ວນະຄອນປາກເຊໃຫ້ດີຂຶ້ນ.

ເພື່ອເປັນແນວທາງທີ່ເໝາະສົມ ໃນການປັບປຸງ ການສອນຂອງຄູຕາມປຶ້ມແບບຮຽນ ແລະ ຄູ່ມືຄູວິຊາ ພາສາລາວຕາມຫຼັກສູດສະບັບປັບປຸງໃໝ່ ໃຫ້ດີຂຶ້ນຕື່ມ ຜູ້ຄົ້ນຄວ້າໄດ້ສຶກສາຈາກຄຳເຫັນຂອງຜູ້ຕອບແບບສອບ ຖາມດັ່ງນີ້ :

- ຮຽກຮ້ອງໃຫ້ຄູສອນ ຕ້ອງໄດ້ມີຄວາມເປັນເຈົ້າການ ສູງ ຕໍ່ການຄົ້ນຄ້ວາບົດຮຽນ ແລະ ມີຄວາມ ຮັບຜິດຊອບສູງໃນການຝຶກຝົນຕົນເອງ ໃນການ ຖ່າຍທອດບົດຮຽນໂດຍການສອນຕາມປຶ້ມຄູມືຄູ ວິຊາພາສາລາວໃຫ້ມີຄວາມຊຳນິຊຳນານຂຶ້ນ .
- ການສອນຂອງຄູສອນຕາມປຶ້ມແບບຮຽນ ແລະ ຄູ່ ມືຄູຕາມເນື້ອໃນປຶ້ມຄູມືຄູຕ້ອງພັດທະນາທັກສະ ໃນການສອນຕາມການແນະນຳໃນປຶ້ມຄູ່ມືຄູວິຊາ ພາສາລາວ ປະສົມປະສານກັບຄວາມສອດຄ່ອງໃນ ລະດັບຄວາມຮູ້ຂອງນັກຮຽນ.
- ຄູສອນຕ້ອງໄດ້ຍົກລະດັບທາງດ້ານວຸດທິການສຶກ ສາຂອງຕົນໃຫ້ສູງຂຶ້ນຕື່ມ .

**6. ສະຫຼຸບ**

ຄູໄດ້ນຳໃຊ້ ວິທີການ ແລະ ທັກສະການສອນ ວິຊາພາສາລາວ ເຂົ້າໃນການສິ່ງຄວາມຮູ້ໃຫ້ແກ່ນັກຮຽນ ແມ່ນຖືກຕ້ອງ ແລະ ພຽງພໍຄົບຖ້ວນຕາມການແນະນຳໃນ ປຶ້ມຄູ່ມືຄູ ທີ່ໄດ້ກຳນົດໂດຍໃນຊັ້ນປະຖົມປີທີ1 ແລະ ທີ2 ແມ່ນເນັ້ນໜັກໃສ່ທັກສະ ການເວົ້າ ແລະ ການຟັງ ເປັນ ສ່ວນຫຼາຍ, ສ່ວນທັກສະການອ່ານແລະ ການຟັງ ແມ່ນ ເນັ້ນໃສ່ຊັ້ນປະຖົມປີທີ 3, ຕີລາຄາຈາກຜົນການວິເຄາະ ແບບສອບຖາມເຫັນວ່າ ຍັງມີບາງບັນຫາທີ່ຄູຍັງມີຄວາມ ກັງວົນ ແລະ ເອົາໃຈໃສ່ເປັນພິເສດນັ້ນກໍຄື ໃນຊັ້ນປະຖົມ ປີທີ 1 ຕ້ອງໄດ້ເອົາໃຈໃສ່ການຖ່າຍທອດຄວາມຮູ້ຂອງຄູ ດ້ານການອອກສຽງທີ່ຍັງບໍ່ທັນຄົບຖ້ວນ ແລະ ຖືກຕ້ອງ ຊັດເຈນທີ່ໃຫ້ນັກຮຽນໄດ້ເວົ້າຕາມ, ສຳລັບໃນຊັ້ນປະຖົມ ປີທີ2 ແລະ ປີທີ 3 ບັນຫາການຖ່າຍທອດຄວາມຮູ້ທັກສະ ດ້ານການຜັນສຽງສະຫຼະ ແລະ ວັນນະຍຸດ ແລະທັກສະ ການຂຽນ ຍັງແມ່ນສິ່ງທ້າທາຍ ແລະ ຄູຕ້ອງໄດ້ເອົາໃຈໃສ່ ເປັນພິເສດຕໍ່ກັບການຮຽນຮູ້ຂອງເດັກໄວຊັ້ນດັ່ງກ່າວ, ສະພາບການນຳໃຊ້ເກນການໃຫ້ຄະແນນ ຂອງຄູສອນ ຕາມຫຼັກສູດໃໝ່ວິຊາພາສາລາວ, ຜ່ານການວິເຄາະຂໍ້ມູນ ຈາກແບບສອບຖາມ ສັງເກດເຫັນວ່າ ຄູໄດ້ປະຕິບັດຄົບ ຖ້ວນ ໃນບັນຫາ ການປະເມີນກ່ອນການ ເລີ້ມສອນທຸກ ຄັ້ງ, ຄູໄດ້ກວດວຽກບ້ານ ແລະ ບົດຝຶກຫັດນັກຮຽນ, ຄູ ໄດ້ຕິດຕາມປະເມີນຜົນໃນ 4 ທັກສະການຮຽນວິຊາພາສາ ລາວ, ຕິດຕາມການປະເມີນການສອນເປັນໄລຍະການ ສອນເພື່ອປະເມີນການຮັບຮູ້ຂອງນັກຮຽນ, ນຳໃຊ້ເກນ ການໃຫ້ຄະແນນຂອງນັກຮຽນ ໃນວິຊາພາສາລາວຕາມຂັ້ນ ຕອນ ມີການປະເມີນທຸກຄັ້ງພາຍຫຼັງສິ້ນສຸດການສອນ ໂດຍມີປຶ້ມບັນທຶກຄະແນນຂອງນັກຮຽນ ເຖິງແນວໃດກໍ ຕາມ ຍັງມີບາງບັນຫາທີ່ຄູຈະຕ້ອງໄດ້ເອົາໃຈໃສ່ຕື່ມ ນັ້ນ ແມ່ນການອາງເກນຄະແນນ ບາງຄົ້ນຄາວຍັງບໍ່ທັນໄດ້ຄົບ ຖ້ວນຕາມເກນ ການໃຫ້ຄະແນນໃນຫັກສູດວິຊາພາສາ ລາວທີ່ໄດ້ກຳນົດໃນປຶ້ມຄູ່ມືຄູ ສະບັບປັບປຸງໃໝ່.

ການຊ່ວຍເຫຼືອຂອງຄູສອນຕໍ່ກັບນັກຮຽນ ທີ່ ຮຽນອອ່ນວິຊາພາສາລາວ ຈາກຜົນການວິເຄາະຂໍ້ມູນແບບ ສອບຖາມສັງເກດໄດ້ວ່າ ຄູສອນແມ່ນນຳໃຊ້ໃນລະດັບ ກາງ ແມ່ນບັນຫາການຊ່ວຍເຫຼືອຂອງຄູສອນ ຕໍ່ກັບ ນັກຮຽນທີ່ຮຽນອອ່ນວິຊາພາສາລາວເປັນຕົ້ນ ບັນຫາ (1)ໃຫ້ນັກຮຽນໄດ້ຮຽນຮູ້ນຳໝູ່ຮ່ວມຫ້ອງທີ່ຮຽນໄດ້ດີ, (2) ບັນຫາໃຫ້ນັກຮຽນໄດ້ຮຽນຮູ້ນຳໝູ່ຮ່ວມຫ້ອງທີ່ຮຽນ ໄດ້ດີ, ບັນຫາຄູຄວນຈັດສັບບ່ອນນັ່ງໃຫ້ມີຜູ້ທີ່ສາມາດ ສື່ສານໄດ້ 2 ພາສາເພື່ອໃຫ້ມີຜູ້ຊ່ວຍເພີ້ມເຕີມ.

**7. ເອກະສານອ້າງອີງ**

ກົດໝາຍວ່າດ້ວຍການສຶກສາ (2016:15 ). ກະຊວງ ສຶກສາທິການ ແລະ ກິລາ. ພິມຄັ້ງທີ1. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ ( 2015: 8-43). ບົດລາຍງານຜົນການຈັດຕັ້ງປະຕິບັດແຜນການແຜນການສຶກສາປະຈຳປີ. ນະຄອນຫຼວງວຽງຈັນ.

ກົມສ້າງຄູ, ພະແນກຍຳລຸງຄູ,( 2015 ). ຂໍກຳນົດ ແລະ ແຜນກ່ຽວການພັດທະນາຄູ. ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ ( 2016: 11,32 ). ບົດລາຍງານຜົນການຈັດຕັ້ງປະຕິບັດແຜນການແຜນການສຶກສາ, ປະຈຳປີ. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ,( 2016 ). ແນະນຳການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ທົ່ວປະດທດ, ພິມຄັ້ງທີ2.ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ ( 2019 ). ປື້ມຄູ່ມືຄູວິຊາພາສາລາວ. ພິມຄັ້ງທີ2. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ(2019 ). ປື້ມແບບຮຽນວິຊາພາສາລາວຂັ້ນປ1. ພິມຄັ້ງທີ2. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ,(2020 ). ປື້ມແບບຮຽນວິຊາພາສາລາວຂັ້ນປ2. ພິມຄັ້ງທີ2. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ,(2020 ). ປື້ມແບບຮຽນວິຊາພາສາລາວຂັ້ນປ3. ພິມຄັ້ງທີ2. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ,(2021 ໜ້າທີ 8 ). ປື້ມຄູ່ມືຄູຝຶກ. ພິມຄັ້ງທີ2. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ, ( 2020 ).ບົດລາຍງານຜົນການຈັດຕັ້ງປະຕິບັດແຜນການແຜນການສຶກສາ ປະຈຳປີ.ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ,(2021 ). ຍຸດທະສາດການສຶກສາ (2021 – 2030). ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ,(2022 ). ກົມສາມັນສຶກສາ (ຫຼັກສູດຊັ້ນປະຖົມສຶກສາ). ພິມຄັ້ງທີ1: ນະຄອນຫຼວງວຽງຈັນ.

ຄຳແສງ ທະລັງສີ ພ້ອມຄະນະ (2020). ການວັດ ແລະ ປະເມີນຜົນທາງການສຶກສາ. ພິມຄັ້ງທີ1. ນະຄອນຫຼວງວຽງຈັນ.

ຄຳຫຼ້າ ຄຳເມືອງຄຸນ (2021). ການປະເມີນຫຼັກສູດການສອນ. ພິມຄັ້ງທີ1. ນະຄອນຫຼວງວຽງຈັນ. ປະເທດລາວ.

ສາຍສະໝອນ ປຣະສອນໄຊ ພ້ອມຄະນະ , (2021 ໜ້າທີ 1, 109 - 110). ຫຼັກສູດ ແລະ ການສອນ. ພິມຄັ້ງທີ1. ນະຄອນຫຼວງວຽງຈັນ.

ສີຖານ ສຸຂະວົງ , ( 2014 : 15). ຍຸດທະສາດການຮຽນ-ການສອນ. ພິມຄັ້ງທີ1. ນະຄອນຫຼວງວຽງຈັນ.

ສຸພິດຣ ຄູນານຸກອນ,( 2551 : 161). ການປະເມີນຫຼັກສູດການຮຽນ-ການສອນ ມະຫາວິທະຍາໄລຂອນແກ່ນ. ປະເທດໄທ.

ສຸຣັດ ສີລະປະອານັ້ນ,(2545 : 154-159 ). ການປະມີນຜົນຫຼັກສູດພາສາໄທ. ມັດທະຍົມຕົ້ນ. ວິທະຍາເຂດການສຶກສາ ເຂດ20. ນະຄອນພະນົມ. ປະເທດໄທ.

ສົມພົງ ພິທິຍະນຸວົງ, (2008 ). ສົມທຽບປະສິດທິຜົນການນຳໃຊ້ປື້ມຕຳລາວິຊາຄະນິດສາດຊັ້ນປະຖົມ. ນະຄອນຫຼວງວຽງຈັນ.

ສົມຍົດ ນາວິການ , (2002 : 28 ). ປະເມີຜົນການໃຊ້ປື້ມແບບຮຽນວິຊາພາສາໄທ. ປະຖົມສຶກສາ. ປະເທດໄທ.

ບຸນຊຶມ ສີສະອາດ ( 2532, ໜ້າ 95 – 96 ). ການວິໄຈຂັ້ນພື້ນຖານ. ສະບັບທີ3. ກຸງເທບມະຫານະຄອນ. ປະເທດໄທ.

ບຸນລຽງ ທູມທອງ, ( 2010 : 3 ).ຍຸດທະສາດການສອນ. ພິມຄັ້ງທີ1. ນະຄອນຫຼວງ   ວຽງຈັນ.

ພະແນກສຶກສາທິການ ແລະ ກິລາແຂວງ ຈຳປາສັກ, ( 2021 ). ຍຸດທະສາດການສຶກສາ ແຂວງ ຈຳປາສັກ (2021-2025 ).

ພະແນກສຶກສາທິການ ແລະ ກິລາແຂວງ ຈຳປາສັ, ( 2022 ). ບົດລາຍງານ ການລົງຕິດຕາມການຈັດຕັ້ງປະຕິບັດການສຶກສາ.

ມະຫາວິທະຍາໄລແຫ່ງຊາດ,( 2021 ). ບົດສະຫຼຸບການຈັດຕັ້ງປະຕິບັດການສຶກສາ ປະຈຳປີ. ນະຄອນຫຼວງວຽງຈັນ.

ລັດຖະບານ ສປປ ລາວ , ( 2012 ). ແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດ ການສຶກສາຂັ້ນພື້ນຖານທີ່ ສປປ. ລາວ.

ເອກະທັດ ສຣຸກຣານິນຕາ, ( 2551, : 10 ). ການປະເມີນຜົນການໃຊ້ປຶ້ມຫຼັກສູດວິຊາໂລກອ້ອມຕົວ. ຊັ້ນປະຖົມ. ປະເທດໄທ.

Ali, M. Q., Nazir, Y., Shaheen, R., & Burki, A. N. (2016). Effectiveness of mentoring indicators in primary school teachers' evaluation toward professional development. *studies,* 4, 661.

Beauchamp. (1968). The curriculum of elemen tyry school. Boston: Allyh and Bacon.

Beauchamp G.A. (1968). The curriculum of elemen tyry school. Boston: Allyh and Bacon.

Bruner. J. (1963). The process of Education. New york: Vintage Books.

Brac Provus, M. (1971). Discrepancy evaluation for educational pro and assesment.Bentov ( 1995 ).

Laba, H. (1962). Curriculum development: theory and practic brace.

Lin., Chang., & Cheng. (2011). Instructional Curriculumm Development. 3rd Edution. China.

Lin, S.-F., Chang, W.-H., & Cheng, Y.-J. (2011). The percieved usefulness of teachers' guides for science teachers. *International journal of science and mathematics education,* 9(6), 1367-1389.

Lea, B & Sara, H., (2012). Attitude of students-teacher towards written teachers' guide.Higher

education studies.vol.2.No. 1.

Lea,  & Sara., (2012).Curriculum Developent. 3rd Edittion. New York. England.

Ranjha., Mahmood., & Butt. (2019). Strategy and methods of Pedagogy. Malaysia.

Ranjha, F. A., Mahmood, M. K., & Butt, I. H. (2019). Use and utility of teacher guides for primary school teachers in Punjab. *Review of Economics and Development Studies,* 5(1), 5-1